" ຜູ້ທີ່ເປັນອາຈານກໍ່ຄືຜູ້ທີ່ມີກະແຈສຳລັບໃຫ້ຕົວທ່ານເອງກາຍເປັນອາຈານໄດ້......... ຊ່ວຍໃຫ້ໂຕເອງຮູ້ວ່າໂຕເອງຂອງເຈົ້າກໍ່ເປັນອາຈານຄົນນຶ່ງ ແລະ ທ່ານເອງກັບພຣະເຈົ້າ ກໍ່ເປັນໜຶ່ງດຽວກັນ ກໍ່ເທົ່ານັ້ນເອງ..........ນີ້ແຫຼະຄືບົດບາດພຽງຢ່າງດຽວເທົ່ານັ້ນຂອງຜູ້ເປັນອາຈານ "

ທ່ານ ອານຸດຕຣາຈານ ຊີງໄຫ່

" ວິທີທາງຂອງເຮົາບໍ່ແມ່ນສາດສະໜາເຮົາບໍ່ຕ້ອງການປ່ຽນບຸກຄົນໃດບຸກຄົນໜຶ່ງໃຫ້ຫັນມານັບຖືສາດສະໜາກາໂຕລິກຫຼືສາດສະໜາພຸດຫຼືສາດສະໜາອື່ນໆ.ເຮົາພຽງແຕ່ມອບວິທີໜຶ່ງຊຶ່ງໃຫ້ເຈົ້າໄດ້ຮູ້ຈັກໂຕເຈົ້າເອງມາຈາກໃສແລະຈຳໄດ້ວ່າພາລະກິດຂອງໂຕເຈົ້າເອງຢູ່ໃນໂລກນີ້ຄືຫຍັງທັງໃຫ້ເຈົ້າໄດ້ພົບຄວາມລັບຂອງຈັກກະວານແລະໄດ້ເຂົ້າໃຈວ່າເປັນຫຍັງຈຶ່ງມີຄວາມທຸກ ທີ່ຫລາຍເຫຼືອລົ້ນແທ້ ໃນໂລກນີ້ ແລະໄດ້ເຫັນສິ່ງທີ່ລໍຖ້າເຈົ້າຢູ່ພາຍ ຫຼັງຄວາມ ຕາຍ."

ທ່ານ ອານຸດຕຣາຈານ ຊີງໄຫ່

" ພວກເຮົາຖືກແຍກອອກຈາກພຣະເຈົ້າ ກໍ່ເພາະວ່າເຮົາມີທຸລະວຸ້ນວາຍຫລາຍເກີນໄປ ຖ້າມີຄົນສົນທະນາກັບເຈົ້າຢູ່ແລ້ວສຽງ"ກຣິງ"ຂອງໂທລະສັບກໍ່ດັງຢູ່ຕະຫລອດເວລາແຕ່ເຈົ້າກັບຫຍູ້ງຢູ່ກັບການສົນທະນາ ຫຼືເຂົ້າຄົວກຳລັງແຕ່ງກິນຢູ່ ກໍ່ບໍ່ມີໃຜຈະສາມາດຕິດຕໍ່ກັບເຈົ້າໄດ້.ເຫດການທຳນອງດຽວນີ້ກໍ່ເກີດຂຶ້ນ ກັບພຣະເຈົ້າ ເຊັ່ນດຽວກັນ ທ່ານກຳລັງຮ້ອງຫາເຮົາຢູ່ທຸກວັນ ແຕ່ເຮົາບໍ່ມີເວລາໃຫ້ທ່ານເລີຍ ແລະຄອຍແຕ່ຈະວາງຫູ ໂທລະສັບ ໃສ່ທ່ານ. "

ທ່ານ ອານດຸຕຣາຈານ ຊີງໄຫ່

# ຊີວະປະວັດຫຍໍ້ຂອງ ທ່ານອານຸດຕຣາຈານ ຊີງໄຫ່
# The Supreme Master Ching Hai

ທ່ານອາຈານຊີງໄຫ່ເກີດໃນຄອບຄົວທີ່ມັ່ງຄັ່ງສົມບູນຄອບຄົວນຶ່ງໃນປະເທດວຽດນາມ ບິດາຂອງທ່ານເປັນແພດ ແຜນບູຮານທີ່ມີຊື່ສຽງ ຄົນນຶ່ງ. ທ່ານໄດ້ຖືກລ້ຽງດູເໝືອນເດັກນ້ອຍທົ່ວໄປໃນຄອບຄົວທີ່ນັບຖືສາດສະໜາກາໂຕລິກອື່ນໆ,ແລະໄດ້ສຶກສາຮຽນຮູ້ກ່ຽວກັບພື້ນຖານຂອງສາດສະໜາພຸດຈາກຍ່າຂອງທ່ານ.ໃນເວລາທີ່ທ່ານຍັງເປັນເດັກຢູ່ນັ້ນທ່ານໄດ້ສະແດງໃຫ້ເຫັນວ່າທ່ານມີພອນສະຫວັນທີ່ສະຫລຽວສະຫລາດເກີນໄວເດັກຂອງຕົວເອງຊຶ່ງທ່ານມີຄວາມສົນໃຈທາງດ້ານປຣັດຊະຍາແລະໜັງສືບົດສອນທຳມະເປັນພິເສດ.ນອກນີ້ທ່ານຍັງມີບຸກຄະລິລັກສະນະທີ່ເປັນຄົນມີເມດຕາຈິດ ທີ່ຜິດທຳມະດາ ຕໍ່ສັບພະສິ່ງທີ່ມີຊີວິດທັງປວງ.

ເມື່ອອາຍຸຂອງທ່ານຍາງເຂົ້າສິບແປດປີເຕັມ ທ່ານອາຈານໄດ້ຖືກສົ່ງໄປສຶກສາຕໍ່ທີ່ປະເທດອັງກິດ,ແລະຫລັງຈາກນັ້ນກໍ່ໄດ້ໄປສຶກສາຕໍ່ທີ່ປະເທດຝຣັ່ງເສດແລ້ວກໍ່ເຢັຽລະມັນ.ຊຶ່ງໃນຂະນະທີ່ທ່ານອາໄສຢູ່ເຢັຽລະມັນນັ້ນທ່ານໄດ້ມີໂອກາດເຮັດວຽກໃຫ້ສະພາກາແດງແລະຕໍ່ມາທ່ານກໍ່ໄດ້ສ້າງຄອບຄົວກັບສາມີຂອງທ່ານຊຶ່ງເປັນນັກວິທະຍາສາດຄົນເຢັຽລະມັນ.ພາຍຫລັງທີ່ສ້າງຄອບຄົວໄດ້ສອງປີຢ່າງມີຄວາມສຸກນັ້ນທ່ານໄດ້ສະລະຊີວິດແຕ່ງງານຂອງທ່ານ ເພື່ອມຸ່ງສະແຫວງຫາການຮູ້ແຈ້ງ ຕາມທີ່ໄດ້ຕັ້ງໃຈໄວ້ເມື່ອໄວເດັກ.ໃນຊ່ວງເວລາດັ່ງກ່າວນັ້ນທ່ານໄດ້ສຶກສາຄົ້ນຄວ້າ ແລະຝຶກຝົນການບຳເພັນສະມາທິ ຢ່າງເຄັ່ງຄັດຫລາຍວິທີ ຕາມການຊີ້ນຳ ນຳພາ ຂອງອາຈານແຕ່ລະທ່ານທີ່ທ່ານເອື້ອມມືເຖິງແຕ່ການສະແຫວງຫາກໍ່ບໍ່ເຫັນຜົນ(ຢູ່ໃນສຸຣາງທຳມະສຸດພຣະສາກະຍະມຸນີ ພຸດທະເຈົ້າ ໄດ້ກ່າວໄວ້ວ່າ “ ທຳມະວິຖີແບບກວນຢີນ(Quan yin method ) ເປັນທຳມະແບບສູງສຸດແຕ່ແລ້ວກໍ່ບໍ່ມີອາຈານ ຂອງທ່ານຄົນໃດຮູ້ຈັກ ທຳມະວິຖີດັ່ງກ່າວເລີຍ) ແລະທ່ານຍັງຢັ່ງຮູ້ອີກວ່າ ຖ້າທ່ານຫາກຍັງປະຕິບັດຢູ່ຕາມລຳພັງເພື່ອພະຍາຍາມຊ່ວຍເຫລືອມວນມະນຸດໃຫ້ລຸດພົ້ນຈາກຄວາມທຸກຍາກແສນເຂັນແລ້ວ ກໍ່ຈະບໍ່ມີຜົນປະໂຫຽດເລີຍແລະທັງຕະໜັກຮູ້ວ່າ ທາງທີ່ດີທີ່ສຸດເພື່ອຊ່ວຍເຫລືອມວນມະນຸດໄດ້ກໍ່ຄື ການບັນລຸ ການຮູ້ແຈ້ງໂດຍຕົວຂອງທ່ານ ເອງກ່ອນ.ນັ້ນກໍ່ຄືເປົ້າໝາຍຫລັກຂອງທ່ານ, ທ່ານອອກເດີນທາງໄປ ທຸກຫົນທຸກແຫ່ງ ເພື່ອສະແຫວງຫາທຳມະວິຖີ ທີ່ຮູ້ແຈ້ງແບບສົມບູນ ຊຶ່ງສາມາດທຳໃຫ້ຫລຸດພົ້ນໃນຊາດດຽວໄດ້ ແລະໃນທີ່ສຸດ ຫລັງຈາກໃຊ້ເວລານານຫລາຍປີ ທ່ານກໍ່ໄດ້ ພົບອາຈານແຫ່ງພູເຂົາຫິມມະໄລທ່ານນຶ່ງ ຊຶ່ງໄດ້ທຳການສິດໃຫ້ທ່ານ ດວ້ຍທຳມະວິຖີ ແບບກວນຢີນ (Quan yin method) ແລະຖ່າຍທອດເທວະວິທະຍາ ອັນສູງສິ່ງທີ່ທ່ານເຝົ້າສະແຫວງຫາມາ ເປັນເວລາຍາວນານ ໃຫ້ແກ່ທ່ານ ພາຍຫລັງທີ່ທ່ານໄດ້ຮັບການຖ່າຍທອດແລະສິດເອົາວິຊາແລ້ວ ຫລັງຈາກນັ້ນທ່ານກໍ່ໄດ້ບຳເພັນຝຶກ ປະຕິບັດໄດ້ໄລຍະນຶ່ງ ທ່ານກໍ່ໄດ້ຮູ້ແຈ້ງ ຢ່າງສົມບູນ.

ເມື່ອທ່ານບັນລຸການຮູ້ແຈ້ງໄດ້ຫລາຍປີຜ່ານໄປ,ທ່ານອາຈານໄດ້ໃຊ້ຊີວິດຢ່າງງຽບໆສັນໂດດ,ໂດຍບໍ່ໄດ້ຖືວ່າທ່ານເປັນແມ່ຊີໃນພຸດທະສາດສະໜາເລີຍ.ຕາມບຸກຄະລິລັກສະນະແລ້ວທ່ານເປັນຄົນຂີ້ອາຍ ຕາມທຳ ມະຊາດ,ທ່ານເຊື່ອງຊອ້ນຂຸມຊັບອັນລ້ຳຄ່າຂອງການຮູ້ແຈ້ງໄວ້ຈົນກະທັ້ງມີຜູ້ຄົນໄດ້ພົບເຫັນການສິດສອນແລະການຖ່າຍທອດຈິດສູ່ຈິດຂອງທ່ານ.ໂດຍການຢືນຢັນຂໍຮ້ອງດວ້ຍຄວາມຈິງໃຈຈຶ່ງໄດ້ຮັບ.ຕາມການບອກເລົ່າຂອງສິດຫລຸ້ນແລກຂອງທ່ານໃນຟໍໂມຊາ ແລະໃນສະຫະລັດອາເມລິກາ.ດວ້ຍເຫດນັ້ນ ທ່ານອາຈານຈຶ່ງໄດ້ເທດສອນແລະໄດ້ຖືກເຊື້ອເຊີນໃຫ້ໄປບັນຍາຍທຳຢູ່ຫລາຍປະເທດໃນໂລກ,ແລະມີສິດສານຸສິດຂອງທ່ານ

ຫລາຍແສນຄົນໄດ້ຮັບການຖ່າຍທອດແລະສິດເອົາວິຊານຳທ່ານ.

ທຸກມື້ນີ້ຜູ້ທີ່ສະແຫວງຫາປັນຍາແລະສັດຈະທຳອັນສູງສິ່ງແມ່ນຫລັ່ງໄຫລມາຫາທ່ານແມ່ນມີນັບມື້ນັບເພີ້ມຂຶ້ນເລື້ອຍໆທີ່ມາຈາກທຸກມູມໂລກຈາກຫລາຍເຊື້ອຊາດແລະສາດສະໜາຂອງຜູ້ທີ່ມີຄວາມຈິງໃຈຢາກບຳເພັນແລະຮ່ຳຮຽນເອົາວິຖີທາງສູ່ການຮູ້ແຈ້ງທັນທີຊື່ງທ່ານອາຈານໄດ້ພິສູດໃຫ້ເຫັນແລ້ວວ່າແມ່ນທຳມະອັນສູງສິ່ງກໍ່ຄືທຳມະວິຖີກວນຢິນນັ້ນ,ທ່ານເອງກໍ່ຢາກຊິດຊ່ວຍໃຫ້ທຸກຄົນໄດ້ຮັບການຖ່າຍທອດແລະໂດຍສະເພາະຢ່າງຍິ່ງກໍ່ຄືການ ນຳພາທາງດ້ານການບຳເພັນຈິດນັ້ນເອງ..